**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກົມຄວບຄຸມມົນລະພິດ

ເລກທີ 045 /ກຊສ.ກຄມ

ນະຄອນຫຼວງວຽງຈັນ, ວັນທີ ໐໖ ກຸມພາ 2013

ຮຽນ: ທ່ານ ຫົວໜ້າ ກົມການນຳເຂົ້າ-ສົ່ງອອກ, ກະຊວງ ອຸດສະຫະກຳ ແລະ ການຄ້າ;

ທ່ານ ຫົວໜ້າ ກົມພາສີ, ກະຊວງການເງິນ;

ທ່ານ ຄະນະບໍດີ ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດ;

ທ່ານ ຜູ້ອຳນວຍການ ໂຮງຮຽນເຕັກນິກການຊ່າງ ລາວ-ເຢຍລະມັນ;

ທ່ານ ຜູ້ອຳນວຍການ ໂຮງຮຽນເຕັກນິກ ປາກປ່າສັກ;

ທ່ານ ຜູ້ອຳນວຍການ ສູນພັດທະນາ ອະຊີວະສຶກສາ;

ທ່ານ ຜູ້ອຳນວຍການ ວິທະຍາໄລຊັບພະວິຊາ

ເລື່ອງ: ການເຕືອນ ອຸບັດຕິໄພຈາກ ສານເຄມີເຮັດຄວາມເຢັນປອມປົນ.

ເພື່ອຄວາມປອດໄພ ຂອງ ເຈົ້າໜ້າທີ່ພາສີ, ບັນດາອາຈານຊ່າງ ພ້ອມດ້ວຍນາຍຊ່າງສ້ອມແປງເຄື່ອງເຮັດຄວາມເຢັນ ແລະ ຜູ້ໃຫ້ບໍລິການຂົນສົ່ງ ແລະ ຈຳໜ່າຍສິນຄ້າທີ່ພົວພັນກັບ ສານເຮັດຄວາມເຢັນ, ກົມຄວບຄຸມມົນລະພິດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ປະຈຸບັນ ໄດ້ມີການປອມປົນ ສານເຮັດຄວາມເຢັນຊະນິດ R-134a ກັບ R-40 ເຊິ່ງກໍ່ໃຫ້ເກີດອຸບັດຕິໄພ ໃນຂະນະນຳໃຊ້ສານເຄມີເຫຼົ່ານີ້ເຂົ້າໃນການເຄື່ອນໄຫວກິດຈະກຳຕ່າງໆດັ່ງກ່າວ ເຊັ່ນ: ໄດ້ເກີດລະເບີດ ທີ່ ສສ ຫວຽດນາມ, ປະເທດ ບຣາຊິນ, ສປ ຈີນ, ສະຫະລັດອາເມລິກາ, ສະຫະລັດອາຣັບເອມິເຣດ, ອັຟການິສະຖານ ແລະ ເອີຣົບຕອນໃຕ້ ໃນເມື່ອບໍ່ດົນມານີ້.

ຮອດປະຈຸບັນ ການຜະລິດສານເຮັດຄວາມເຢັນປອມປົນດັ່ງກ່າວ ໄດ້ສືບຕໍ່ແຜ່ຫຼາຍເປັນວົງກວ້າງໃນທົ່ວໂລກ ໂດຍບໍ່ສາມາດຮູ້ຂໍ້ມູນກ່ຽວກັບຊື່ການຄ້າ, ບໍລິສັດຜູ້ຜະລິດ ແລະ ຜູ້ຈຳໜ່າຍສະເພາະ ທີ່ເປັນບັນຫາຫຍຸ້ງຍາກໃນການຄວບຄຸມ ການນຳເຂົ້າ ສົ່ງອອກ ຫຼື ຜ່ານແດນ, ການນຳໃຊ້ ແລະ ເກັບຮັກສາໄວ້ ໃນລະດັບປະເທດພາຄີ.

ເຖິງແມ່ນວ່າ ສປປ ລາວ ເປັນພຽງປະເທດນຳເຂົ້າ ແລະ ຊົມໃຊ້ໃນປະລິມານໜ້ອຍກໍ່ຕາມ ແຕ່ຍ້ອນຂາດ ເງື່ອນໄຂໃນການດຳເນີນການກວດສອບ ສານເຮັດຄວາມເຢັນປອມປົນ ເຫຼົ່ານັ້ນ ດ້ວຍຫ້ອງທົດລອງ, ຈຶ່ງມີຄວາມສ່ຽງທີ່ຈະເກີດອຸບັດຕິໄພ ອັນເຮັດໃຫ້ສູນເສຍທັງຊີວິດ ແລະ ຊັບສິນ. ສະນັ້ນ ເພື່ອປ້ອງກັນອຸບັດຕິໄພດັ່ງກ່າວເກີດຂຶ້ນ, ກົມຄວບຄຸມມົນລະພິດ ຈຶ່ງສະເໜີມາຍັງບັນດາທ່ານຈົ່ງປະຕິບັດດັ່ງນີ້:

- ຕິດຕໍ່ໜ່ວຍງານໂອໂຊນ, ກົມຄວບຄຸມມົນລະພິດ, ກຊສ ເພື່ອກວດສອບສານເຮັດຄວາມເຢັນເບື້ອງຕົ້ນ;
- ຫ້າມນໍາໃຊ້ ສານເຮັດຄວາມເຢັນປອມປົນ ຢ່າງເດັດຂາດ;
- ຄວນຈັດຊື້ສານເຮັດຄວາມເຢັນ ຈາກບໍລິສັດຈໍາໜ່າຍທີ່ເຊື່ອຖືໄດ້ຢູ່ພາຍໃນ ຫຼື ບໍລິສັດຈໍາໜ່າຍຢູ່ຕ່າງປະເທດທີ່ມີໃບຮັບຮອງກ່ຽວກັບສານເຮັດຄວາມເຢັນ; ແລະ
- ຕ້ອງກວດລະບາບສານເຮັດຄວາມເຢັນທີ່ເກັບຮັກສາໄວ້ຢ່າງປົກກະຕິ.

ດັ່ງນັ້ນ, ຫວັງວ່າຈະໄດ້ຮັບຄວາມຮ່ວມມືຈາກບັນທ່ານຕາມເຫັນສົມຄວນດ້ວຍ.

ຫົວໜ້າກົມຄວບຄຸມມົນລະພິດ

ແກ້ວບັງອາ ແກ້ວພາ

<u>ສໍາເນົາສົ່ງ</u>

- ຫ້ອງການ, ກຊສ
- ກົມແຜນການ ແລະ ການຮ່ວມມື, ກຊສ
- ກົມກວດກາ, ກຊສ

<u>ສອບຖາມຂໍ້ມູນເພີ່ມເຕີມ:</u>

ກົມຄວບຄຸມມົນລະພິດ, ໂທລະສັບ: 021-243702.